ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0707/ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 30 JUL 2020

# ຄຳແນະນຳ
## ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້

- ອີງຕາມ ກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ດຳລັດວ່າດ້ວຍສະມາຄົມ, ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017;
- ອີງຕາມໜັງສືສະເໜີຂອງກົມການຄ້າພາຍໃນ, ສະບັບເລກທີ 0529/ກຄພນ.ປປຊ, ລົງວັນທີ 23 ມິຖຸນາ 2019.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ ດັ່ງນີ້:

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ຜັນຂະຫຍາຍເນື້ອໃນ ມາດຕາ 30 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມປົກປ້ອງຜູ້ຊົມໃຊ້ ເພື່ອເປັນບ່ອນອີງພື້ນຖານໃຫ້ແກ່ການສ້າງຕັ້ງສະມາຄົມປົກປ້ອງຜູ້ຊົມໃຊ້ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ແລະ ຫຼຸດຜ່ອນປະກົດການຫຍໍ້ທໍ້ໃນສັງຄົມ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### 2. ສະມາຄົມປົກປ້ອງຜູ້ຊົມໃຊ້

ສະມາຄົມປົກປ້ອງຜູ້ຊົມໃຊ້ ແມ່ນການຈັດຕັ້ງສັງຄົມໜຶ່ງ ຊຶ່ງສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ, ບໍ່ຫວັງຜົນກຳໄລ ມີນ້ຳໃຈເສຍສະຫຼະໃນການປະກອບສ່ວນທຶນ, ວັດຖຸ, ສະຕິປັນຍາ, ເຫື່ອແຮງ ຊຶ່ງມີພາລະບົດບາດໃຫ້ການຊ່ວຍເຫຼືອ, ໃຫ້ຄຳປຶກສາ, ຄຳແນະນຳ ແລະ ປົກປ້ອງສິດ-ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ທີ່ໄດ້ຮັບຜົນກະທົບທາງລົບຈາກການຊົມໃຊ້ສິນຄ້າ ແລະ ການບໍລິການ.

### 3. ຫຼັກການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້

ສະມາຄົມປົກປ້ອງຜູ້ຊົມໃຊ້ ສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວຕາມຫຼັກການ ທີ່ກຳນົດໄວ້ໃນມາດຕາ 6 ຂອງດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ໂດຍມີລາຍລະອຽດ ດັ່ງນີ້:

3.1 ຕື່ນຕົວສະໝັກໃຈສ້າງຕັ້ງ, ປະກອບທຶນ, ເຂົ້າຮ່ວມເຄື່ອນໄຫວ ຫຼື ອອກຈາກສະມາຄົມ ໂດຍບໍ່ມີຜູ້ໃດຈຳກັດ ຫຼື ບັງຄັບ;

3.2 ມີຈຸດປະສົງ ແລະ ເປົ້າໝາຍຊັດເຈນ;

3.3 ເຄື່ອນໄຫວເປັນປະຈຳ;

3.4 ຄຸ້ມຄອງ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ ທຸກການເຄື່ອນໄຫວຂອງຕົນ;

3.5 ກຸ້ມຕົນເອງທາງດ້ານການເງິນ;

3.6 ເຄື່ອນໄຫວບໍ່ຫວັງຜົນກຳໄລ;

3.7 ໂປ່ງໃສ, ເປີດເຜີຍ ແລະ ມີຄວາມສະເໝີພາບ.

4. ເງື່ອນໄຂ ການສ້າງຕັ້ງສະມາຄົມປົກປ້ອງຜູ້ຊົມໃຊ້

ການສ້າງຕັ້ງສະມາຄົມປົກປ້ອງຜູ້ຊົມໃຊ້ ຕ້ອງມີເງື່ອນໄຂຄົບຖ້ວນ ທີ່ກຳນົດໄວ້ໃນມາດຕາ 7 ຂອງດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ໂດຍມີລາຍລະອຽດ ດັ່ງນີ້:

4.1 ມີຈຸດປະສົງ ແລະ ກຳນົດຂົງເຂດການເຄື່ອນໄຫວທີ່ຈະແຈ້ງ;

4.2 ມີຄະນະຂົນຂວາຍການສ້າງຕັ້ງສະມາຄົມປົກປ້ອງຜູ້ຊົມໃຊ້ ຢ່າງໜ້ອຍສາມຄົນ ໂດຍແມ່ນຜູ້ລິເລີ່ມສ້າງຕັ້ງສະມາຄົມປົກປ້ອງຜູ້ຊົມໃຊ້ເປັນຜູ້ບັງຄັບ ຊຶ່ງຢ່າງໜ້ອຍໜຶ່ງໃນສາມຂອງຄະນະຂົນຂວາຍ ຕ້ອງມີໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກ ທີ່ກ່ຽວຂ້ອງກັບຈຸດປະສົງເຄື່ອນໄຫວຂອງສະມາຄົມປົກປ້ອງຜູ້ຊົມໃຊ້;

4.3 ຜູ້ລິເລີ່ມ, ຄະນະຜູ້ລິເລີ່ມ, ຄະນະຂົນຂວາຍສ້າງຕັ້ງ, ຄະນະບໍລິຫານ, ຄະນະກວດກາ ແລະ ຜູ້ອຳນວຍການ ຕ້ອງແມ່ນພົນລະເມືອງລາວ, ມີອາຍຸແຕ່ສິບແປດປີຂຶ້ນໄປ ແລະ ມີປະຫວັດຈະແຈ້ງ;

4.4 ຊື່ຂອງສະມາຄົມທີ່ຈະສ້າງຕັ້ງຂຶ້ນ ບໍ່ຊໍ້າຊ້ອນກັບຊື່ຂອງສະມາຄົມອື່ນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຂຶ້ນຢ່າງຖືກຕ້ອງກ່ອນແລ້ວໃນທ້ອງຖິ່ນດຽວກັນ, ຕ້ອງເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ບໍ່ມີລັກສະນະຫຍາບຄາຍ, ຖ້າມີຄວາມຈຳເປັນແປເປັນພາສາຕ່າງປະເທດກໍໄດ້;

4.5 ມີສຳນັກງານບ່ອນເຮັດວຽກ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້ ໂດຍມີການຢັ້ງຢືນຈາກ ອົງການປົກຄອງບ້ານ, ມີໜັງສືຢັ້ງຢືນກຳມະສິດ ຫຼື ສັນຍາເຊົ່າ ທີ່ຖືກຕ້ອງຕາມກົດໝາຍ;

4.6 ມີກົດລະບຽບ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້ ຕາມແບບພິມທາງລັດຖະການ;

4.7 ມີຈຳນວນສະມາຊິກ ທີ່ໄດ້ລົງທະບຽນສະໝັກໃຈເຂົ້າຮ່ວມເຄື່ອນໄຫວ ໃນສະມາຄົມປົກປ້ອງຜູ້ຊົມໃຊ້ ຢ່າງຄົບຖ້ວນຕາມກຳນົດ ຄື:

1) ສະມາຄົມ ທີ່ເຄື່ອນໄຫວທົ່ວປະເທດ ຕ້ອງມີສະມາຊິກຢ່າງໜ້ອຍຊາວຫ້າຄົນ ຂຶ້ນໄປ;
2) ສະມາຄົມ ທີ່ເຄື່ອນໄຫວພາຍໃນແຂວງ, ນະຄອນຫຼວງ ຕ້ອງມີສະມາຊິກຢ່າງໜ້ອຍສິບຫ້າຄົນ ຂຶ້ນໄປ;
3) ສະມາຄົມ ທີ່ເຄື່ອນໄຫວພາຍໃນເມືອງ, ນະຄອນ ຕ້ອງມີສະມາຊິກຢ່າງໜ້ອຍສິບຄົນ ຂຶ້ນໄປ.

5. ຂັ້ນຕອນການຂໍອະນຸມັດສ້າງຕັ້ງ, ການຈົດ ແລະ ການຕໍ່ທະບຽນ

ຂັ້ນຕອນການຂໍອະນຸມັດສ້າງຕັ້ງ, ການຈົດ ແລະ ການຕໍ່ທະບຽນ ແມ່ນໄດ້ກຳນົດໄວ້ໃນ ມາດຕາ 16, 20 ແລະ 21 ຂອງດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017.

6. ອົງການທີ່ມີສິດອະນຸມັດສ້າງຕັ້ງ ແລະ ຈົດທະບຽນ, ຂັ້ນຕອນການພິຈາລະນາອະນຸມັດສ້າງຕັ້ງສະມາຄົມ

ອົງການທີ່ມີສິດອະນຸມັດສ້າງຕັ້ງ ແລະ ຈົດທະບຽນ, ຂັ້ນຕອນການພິຈາລະນາອະນຸມັດສ້າງຕັ້ງສະມາຄົມ ແມ່ນໄດ້ກຳນົດໄວ້ໃນມາດຕາ 22, 23, 24, 25, 26 ແລະ ມາດຕາ 27 ຂອງດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017.

7. ສິດ ແລະ ໜ້າທີ່ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້

ສະມາຄົມປົກປ້ອງຜູ້ຊົມໃຊ້ ມີສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ແລະ ມາດຕາ 29 ຂອງດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ໂດຍມີລາຍລະອຽດ ດັ່ງນີ້:

7.1 ເຄື່ອນໄຫວໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງຕົນ;

7.2 ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ພະແນກການຕ່າງໆຂອງແຂວງ, ນະຄອນຫຼວງ, ຫ້ອງການຂອງເມືອງ, ເທດສະບານ, ນະຄອນ ທີ່ພົວພັນກັບຂົງເຂດ ແລະ ຂະແໜງການ ທີ່ສະມາຄົມເຄື່ອນໄຫວ ໃນການຂຶ້ນແຜນ ແລະ ການປະຕິບັດວຽກງານຂອງຕົນ ຢູ່ທ້ອງຖິ່ນ;

7.3 ຮັບ, ຄົ້ນຄວ້າ, ພິຈາລະນາຄຳສະເໜີ ຂອງຜູ້ຊົມໃຊ້ ແລະ ຈັດຕັ້ງການໄກ່ເກ່ຍ ລະຫວ່າງຜູ້ຊົມໃຊ້ ແລະ ຜູ້ສະໜອງຕາມລະບຽບກົດໝາຍ;

7.4 ເປັນຜູ້ຕາງໜ້າຜູ້ຊົມໃຊ້ ໃນການແກ້ໄຂຂໍ້ຂັດແຍ່ງ ແລະ ການຮ້ອງຟ້ອງຜູ້ສະໜອງ;

7.5 ສະເໜີຕໍ່ອົງການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ຂອງລັດ ກ່ຽວກັບການລະເມີດກົດໝາຍຂອງຜູ້ສະໜອງ;

7.6 ສະເໜີການກະທຳທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ຕໍ່ອົງການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ຂອງລັດ;

7.7 ປະກອບຄຳເຫັນ ຕໍ່ອົງການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ຂອງລັດ ກ່ຽວກັບມາດຕະການ ແລະ ການສ້າງນິຕິກຳຕ່າງໆ ທີ່ພົວພັນເຖິງວຽກງານປົກປ້ອງຜູ້ຊົມໃຊ້;

7.8 ແນະນຳ, ຊ່ວຍເຫຼືອຜູ້ຊົມໃຊ້ ໃນເວລາຜູ້ຊົມໃຊ້ມີບັນຫາກ່ຽວກັບສິນຄ້າ ແລະ ການບໍລິການ ແລະ ຮັບປະກັນຄວາມໂປ່ງໃສ ແລະ ເປັນທຳ ໃນເວລາເປັນຕົວແທນໃນການໄກ່ເກ່ຍ;

7.9 ລະດົມຂົນຂວາຍ ແລະ ຮັບເອົາການສະໜັບສະໜູນ, ຊ່ວຍເຫຼືອ, ການບໍລິຈາກທຶນຈາກບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການຂອງລັດ;

7.10 ພິຈາລະນາຮັບເອົາສະມາຊິກໃໝ່ ຫຼື ປົດສະມາຊິກ ອອກຈາກສະມາຄົມ;

7.11 ສິດໃນການເຄື່ອນໄຫວຕ່າງປະເທດ;

7.12 ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ.

**8. ພັນທະ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້**

ສະມາຄົມປົກປ້ອງຜູ້ຊົມໃຊ້ ມີພັນທະທີ່ກຳນົດໄວ້ໃນມາດຕາ 30 ຂອງດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ໂດຍມີລາຍລະອຽດ ດັ່ງນີ້:

8.1 ລາຍງານປະຈຳງວດ, ຫົກເດືອນ ແລະ ປະຈຳປີ ໃຫ້ອົງການອະນຸມັດສ້າງຕັ້ງ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງກ່ຽວກັບສະພາບການຈັດຕັ້ງ, ການເຄື່ອນໄຫວວຽກງານ ແລະ ລາຍຮັບ-ລາຍຈ່າຍງົບປະມານຂອງຕົນ;

8.2 ລະດົມທຶນ ຫຼື ຮັບເອົາ ການບໍລິຈາກ, ການຊ່ວຍເຫຼືອ ຈາກບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດຕ້ອງສອດຄ່ອງກັບຈຸດປະສົງຂອງສະມາຄົມ ບົນພື້ນຖານກົດໝາຍ ແລະ ລະບຽບການຂອງລັດ;

8.3 ນຳໃຊ້ທຶນທັງໝົດ ທີ່ສະມາຄົມລະດົມມາໄດ້ ໃຫ້ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍຂອງສະມາຄົມ;

8.4 ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບການບັນຊີ, ການກວດສອບ ແລະ ກົດລະບຽບຂອງສະມາຄົມຢ່າງເຂັ້ມງວດ;

8.5 ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ ໃນກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ.

**9. ຂໍ້ຫ້າມ ສຳລັບສະມາຄົມປົກປ້ອງຜູ້ຊົມໃຊ້**

ຫ້າມສະມາຄົມປົກປ້ອງຜູ້ຊົມໃຊ້ ມີການເຄື່ອນໄຫວ ທີ່ກຳນົດໄວ້ໃນມາດຕາ 31 ຂອງດຳລັດວ່າດ້ວຍສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ໂດຍມີລາຍລະອຽດ ດັ່ງນີ້:

9.1 ສວຍໃຊ້ສິດເສລີພາບ ໃນການສ້າງຕັ້ງສະມາຄົມ ຫຼື ໃນນາມສະມາຄົມ ເພື່ອເຄື່ອນໄຫວຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ;

9.2 ສະໜັບສະໜູນ ຫຼື ເຄື່ອນໄຫວທີ່ຈະເປັນອັນຕະລາຍ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ, ສິດເສລີພາບຂອງບຸກຄົນອື່ນ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;

9.3 ເຄື່ອນໄຫວທີ່ນໍາໄປສູ່ການແບ່ງແຍກຄວາມສາມັກຄີ ພາຍໃນຊາດ, ທ້ອງຖິ່ນ, ສາສະໜາ ແລະ ເຜົ່າຕ່າງໆ;

9.4 ທຳລາຍຜົນປະໂຫຍດຂອງຊາດ, ລວມໝູ່ ແລະ ບຸກຄົນ;

9.5 ປອມແປງ, ມອບໂອນ, ໃຫ້ເຊົ່າ, ໃຫ້ຢືມໃບອະນຸມັດ ຫຼື ທະບຽນສະມາຄົມ ດ້ວຍຮູບການໃດກໍຕາມ;

9.6 ກູ້ຢືມ ຫຼື ໃຫ້ຢືມ, ຄໍ້າປະກັນການກູ້ຢືມຕ່າງໆ ຈາກສະຖາບັນການເງິນ, ນິຕິບຸກຄົນ ແລະ ບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ;

9.7 ຮັບເອົາຊ່ຽວຊານ ແລະ ອາສາສະໝັກຕ່າງປະເທດ ມາເຮັດວຽກປະຈຳຢູ່ສະມາຄົມ.

**10. ການຮັບເອົາທຶນ, ຊັບສິນຈາກພາຍໃນ ແລະ ຕ່າງປະເທດ**

ສະມາຄົມ ສາມາດຮັບເອົາທຶນ, ຊັບສິນຈາກບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຂອງ ສປປ ລາວ ແລະ ຕ່າງປະເທດ ທີ່ກຳນົດໄວ້ໃນມາດຕາ 55 ຂອງດຳລັດວ່າດ້ວຍສະມາຄົມ ເລກທີ 238/ລບ, ລົງວັນທີ 11 ສິງຫາ 2017.

**11. ການກວດສອບທາງດ້ານການເງິນ**

ການນຳໃຊ້ເງິນ ແລະ ຊັບສິນ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້ ແມ່ນຈະຕ້ອງໄດ້ຜ່ານການຕິດຕາມ, ກວດກາ ແລະ ກວດສອບທາງດ້ານການເງິນ ແລະ ຊັບສິນຂອງສະມາຄົມປົກປ້ອງຜູ້ຊົມໃຊ້ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງກະຊວງການເງິນ ຕາມລະບຽບການທີ່ໄດ້ກຳນົດໄວ້.

**12. ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

12.1 ໂຄສະນາເຜີຍແຜ່ ວຽກງານປົກປ້ອງຜູ້ຊົມໃຊ້ ກໍຄືວຽກງານສະມາຄົມປົກປ້ອງຜູ້ຊົມໃຊ້ ໃຫ້ສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈ;

12.2 ສະເໜີສ້າງຕັ້ງ ຫຼື ຍຸບເລີກ, ຕິດຕາມ, ກວດກາ ແລະ ຄຸ້ມຄອງການເຄື່ອນໄຫວ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້;

12.3 ຮັບ ແລະ ແກ້ໄຂຄຳສະເໜີ ຂອງສະມາຄົມປົກປ້ອງຜູ້ຊົມໃຊ້ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຜູ້ສະໜອງ;

12.4 ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງລັດ.

**13. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ ພ້ອມທັງລາຍງານການຈັດຕັ້ງປະຕິບັດ ໃຫ້ຂັ້ນເທິງໄດ້ຮັບຊາບຢ່າງເປັນປົກກະຕິ.

**14. ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ